## ບົດຮຽນ 29 - ການບັບຕິສະມາດ້ວຍນ້ຳ

ໃນບົດຮຽນທີ 13 ເຮົາໄດ້ພິຈາລະນາສັ້ນໆ ເຖິງສິ່ງທີ່ພຣະຄຳພີສອນກ່ຽວກັບການຮັບບັບຕິສະມາໃນນ້ຳ. ຢ່າງໃດກໍຕາມ, ເນື່ອງຈາກການໃຫ້ບັບຕິສະມາດ້ວຍນ້ຳແມ່ນສິ່ງທີ່ປະຕິບັດກັນໃນຫຼາຍຄຣິສຕະຈັກ ແລະ ມີຄວາມເຂົ້າໃຈຜິດມາຕະຫຼອດ. ພວກເຮົາຈະອຸທິດໝົດທັງບົດນີ້ໃຫ້ກັບເລື່ອງບັບຕິສະມາ.

ຄຳວ່າ "ບັບຕິສະມາ" ຫມາຍຄວາມວ່າແນວໃດ? ມີຫຼາຍຄົນທີ່ສອນວ່າ "ບັບຕິໂຊ" ໃນພາສາກຼີກ ຫມາຍຄວາມວ່າ "ການແຊ່ (ຫຼືຈຸ່ມ) ໃນນ້ຳ" ຫຼື "ຫົດນ້ຳ." ໃນມັດທາຍ 3:11, ໂຢຮັນ ບັບຕິສະໂຕ ເວົ້າວ່າ: "ຂ້າພະເຈົ້າໃຫ້ພວກເຈົ້າຮັບບັບຕິສະມາດ້ວຍນ້ຳ ຫມາຍເຖິງການຖິ້ມໃຈເກົ່າແລ້ວເອົາໃຈໃຫມ່: ແຕ່ຜູ້ທີ່ສະເດັດມາຫຼັງຂ້າພະເຈົ້າກໍມີຣິດກວ່າຂ້າພະເຈົ້າອີກ, ແມ່ນແຕ່ເກີບເພິ່ນ ຂ້າພະເຈົ້າກໍບໍ່ຄວນເຈັບ: ລາວຈະໃຫ້ພວກເຈົ້າຮັບບັບຕິສະມາດ້ວຍພຣະວິນຍານບໍລິສຸດ ແລະ ດ້ວຍໄຟ." ຈົ່ງສັງເກດເບິ່ງວ່າ ມີບັບຕິສະມາສາມແບບຕ່າງກັນທີ່ໄດ້ກ່າວມາໃນຂໍ້ນີ້. ຄື:

1) ບັບຕິສະມາດ້ວຍນ້ຳ;

2) ບັບຕິສະມາດ້ວຍພຣະວິນຍານບໍລິສຸດ; ແລະ

3) ບັບຕິສະມາດ້ວຍໄຟ.

ບັບຕິສະມາສອງອັນນີ້ບໍ່ມີສ່ວນກ່ຽວຂ້ອງກັບນ້ຳ. ບັບຕິສະມາໃນພຣະຄຳພີມີຢ່າງຫນ້ອຍເຈັດປະເພດແຕກຕ່າງກັນ ແລະ ສ່ວນໃຫຍ່ແມ່ນບໍ່ກ່ຽວຂ້ອງກັບນ້ຳ. ໃຫ້ພວກເຮົາເບິ່ງຕົວຢ່າງອື່ນໆ.

"ນອກຈາກນັ້ນ, ພີ່ນ້ອງທັງຫລາຍເອີຍ, ເຮົາຢາກໃຫ້ພວກເຈົ້າລະນຶກເຖິງ ສິ່ງທີ່ເກີດຂຶ້ນກັບບັນພະບຸລຸດຂອງພວກເຮົາ ເພິ່ນໄດ້ຢູ່ໃຕ້ການຄຸ້ມຄອງຂອງເສົາເມກ ແລະ ຕ່າງກໍໄດ້ຜ່ານທະເລແດງໄປທຸກຄົນ ພວກເພິ່ນໄດ້ຮັບບັບຕິສະມາໃນເມກ ແລະໃນທະເລຮ່ວມກັບໂມເຊທຸກຄົນ (1 ໂກລິນໂທ 10:1-2).

ຂໍ້ພຣະຄຳພີເຫຼົ່ານີ້ເວົ້າເຖິງເຫດການໃນອົບພະຍົບ 13-14. ພຣະເຈົ້າໄດ້ແຍກທະເລແດງ ແລະ ໃຫ້ຊາວອິດສະຣາເອນຍ່າງຜ່ານທະເລເທິງພື້ນດິນແຫ້ງ. ອີງຕາມຂໍ້ພຣະຄຳພີທີ່ກ່າວມາຂ້າງເທິງ, ອິດສະຣາເອນໄດ້ຮັບບັບຕິສະມາເມື່ອພວກເຂົາຍ່າງເທິງດິນແຫ້ງ.

ຮູບ

ທີ່ມາ: https://filedn.com/lD0GfuMvTstXgqaJfpLL87S/sweet_images/jpg/02/02_Ex_14_07_RG.jpg -
ໃຊ້ສຳລັບເປັນຕົວຢ່າງຂອງອິດສະຣາເອນຍ່າງຜ່ານທະເລແດງເທົ່ານັ້ນ

ເຫັນໄດ້ຊັດເຈນວ່າ ບໍ່ມີນ້ຳກ່ຽວຂ້ອງກັບບັບຕິສະມານີ້. ມັນເປັນການບັບຕິສະມາແຫ້ງ! "ເຮົາຈະຕ້ອງຮັບບັບຕິສະມາຢ່າງໜຶ່ງທີ່ທໍລະມານ ແລະ ເຮົາກໍເປັນທຸກໃຈຫລາຍຈົນກວ່າການນີ້ຈະສຳເລັດ!" (ລູກາ 12:50). ພຣະເຢຊູຄຣິດໄດ້ຮັບບັບຕິສະມາດ້ວຍນ້ຳແລ້ວ (ລູກາ 3:21). ແຕ່ພຣະອົງເວົ້າເຖິງບັບຕິສະມາໃນອະນາຄົດ ໃນລູກາ 12:50. ອັນນີ້ແມ່ນການກ່າວເຖິງຄວາມຕາຍຂອງພຣະອົງທີ່ຈະມາເທິງໄມ້ກາງແຂນ. ການທີ່ພຣະອົງຖືກຄຶງເທິງໄມ້ກາງແຂນກໍເປັນບັບຕິສະມາ, ແຕ່ພຣະອົງບໍ່ໄດ້ຈຸ່ມຢູ່ໃນນ້ຳ ຫຼື ຫົດດ້ວຍນ້ຳ. ໃນທ້ອງເລື່ອງນີ້, ຄຳວ່າ "ບັບຕິສະມາ" ບໍ່ໄດ້ຫມາຍຄວາມວ່າ "ແຊ່ນ້ຳ (ຫຼືຈຸ່ມ) ນ້ຳ."

ໃນພຣະຄຳພີ, ຄຳວ່າ "ບັບຕິສະມາ" ໝາຍເຖິງການເອົາຕົວເຮົາເຂົ້າໄປໃນບາງສິ່ງບາງຢ່າງ ຫຼື ດ້ວຍບາງສິ່ງບາງຢ່າງ. ເມື່ອຊາວອິດສະຣາເອນຍ່າງຜ່ານທະເລເທິງພື້ນດິນແຫ້ງ ພວກເຂົາໄດ້ກຳລັງຢູ່ໃຕ້ການນຳພາຂອງໂມເຊ. ເມື່ອພຣະເຢຊູຄຣິດໄດ້ສິ້ນພຣະຊົນເທິງໄມ້ກາງແຂນ, ພຣະອົງໄດ້ຮັບເອົາບາບກຳຂອງພວກເຮົາ ແລະ ດ້ວຍຄວາມຕາຍນັ້ນຜິດບາບຖືກນຳໄປ. ໂຣມບົດທີ 6 ບອກພວກເຮົາວ່າ ພວກເຮົາໄດ້ຮັບບັບຕິສະມາໂດຍພຣະເຢຊູຄຣິດ. ອັນນີ້ແມ່ນງານຂອງພຣະວິນຍານບໍລິສຸດ ແລະ ບໍ່ກ່ຽວຂ້ອງຫຍັງກັບນ້ຳ. ພຣະວິນຍານບໍລິສຸດຊົງນຳພວກເຮົາເຂົ້າໃນພຣະເຢຊູຄຣິດ. ພວກເຮົາຖືກຍອມຮັບໂດຍການສິ້ນພຣະຊົນຂອງພຣະອົງ. ໃນອີກດ້ານໜຶ່ງ, ພຣະເຈົ້າຊົງໃຊ້ການເສຍຊີວິດຂອງພຣະເຢຊູຄຣິດເປັນການຊຳລະບາບກຳຂອງພວກເຮົາ.

<u>ບັບຕິສະມາໃດ?</u>

ໜ້າເສຍດາຍ, ຜູ້ທີ່ເຊື່ອຫຼາຍຄົນໃນພຣະເຈົ້ານຶກເຖິງບັບຕິສະມາດ້ວຍນ້ຳ ສະເພາະຕອນທີ່ພວກເຂົາອ່ານພົບຄຳວ່າ "ບັບຕິສະມາ" ໃນພຣະຄຳພີ. ດັ່ງທີ່ພວກເຮົາໄດ້ເຫັນ, ບັບຕິສະມາມີຫລາຍແບບຕ່າງກັນໃນພຣະຄຳພີ ແລະ ສ່ວນໃຫຍ່ແມ່ນບໍ່ໄດ້ກ່ຽວຂ້ອງກັບນ້ຳ. ພຣະຄຳພີກ່າວວ່າ:

1) ອິດສະຣາເອນໄດ້ຮັບບັບຕິສະມາຈາກໂມເຊໃນເມກ ແລະ ໃນທະເລ (1 ໂກຣິນໂທ 10:1-2)

2) ການບັບຕິສະມາຫລາຍແບບຕ່າງກັນຕາມພຣະບັນຍັດ [ອ່ານເພີ່ມເຕີມກ່ຽວກັບເລື່ອງນີ້ໄດ້ຂ້າງລຸ່ມນີ້.]

3) ພິທີຮັບບັບຕິສະມາຕາມປະເພນີຂອງຊາວຍິວ (ມາລະໂກ 7:1-9) [ຄວນສັງເກດວ່າ ພຣະເຈົ້າບໍ່ໄດ້ສັ່ງໃຫ້ຮັບບັບຕິສະມາເຫຼົ່ານີ້ ແລະສັ່ງໃຫ້ຮັບຢ່າງເຄັ່ງຄັດໂດຍພຣະເຢຊູຄຣິດ. ລວມທັງການຖືປະຕິບັດອື່ນໆ ເຊັ່ນການບັບຕິສະມາ (ລ້າງມື) ກ່ອນທີ່ຈະກິນເຂົ້າ ແລະ ການບັບຕິສະມາໃຫ້ຈອກ, ໝໍ້, ໝໍ້ຂາງ, ແລະ ອື່ນໆ]

4) ການບັບຕິສະມາແຫ່ງການກັບໃຈໃໝ່ຂອງໂຢຮັນ (ລູກາ 3:3) [ນອກຈາກເປັນການກັບໃຈໃຫມ່ແລ້ວ, ການຮັບບັບຕິສະມານີ້ຍັງເປັນການບອກໃຫ້ຮູ້ວ່າ ພຣະເຢຊູຊົງເປັນພຣະເມຊີອາຂອງອິດສະຣາເອນ (ໂຢຮັນ 1:31).

5) ການຮັບບັບຕິສະມາເທິງໄມ້ກາງແຂນໂດຍການຕາຍຂອງພຣະຄຣິດ (ລູກາ 12:50).

6) ພຣະຄຣິດຮັບບັບຕິສະມາດ້ວຍພຣະວິນຍານບໍລິສຸດ (ມັດທາຍ 3:11) [ບັບຕິສະມານີ້ໄດ້ເກີດຂຶ້ນໃນກິດຈະການ 2. (ເບິ່ງ ກິດຈະການ 1:4-5, 2:3-4)]

7) ພຣະຄຣິດໄດ້ຮັບບັບຕິສະມາດ້ວຍໄຟ (ມັດທາຍ 3:11) [ອັນນີ້ເປັນການຮັບບັບຕິສະມາແຫ່ງການພິພາກສາໃນອະນາຄົດຂອງອິດສະຣາເອນ (ມັດທາຍ 3:7-12).

8) ພຣະວິນຍານບໍລິສຸດໃຫ້ບັບຕິສະມາຜູ້ທີ່ເຊື່ອເຂົ້າໃນພຣະກາຍຂອງພຣະຄຣິດ (1 ໂກຣິນໂທ 12:13)

ບາງຄົນໄດ້ຂຽນອອກມາເປັນລາຍການບັບຕິສະມາຫຼາຍເຖິງສິບສອງປະເພດໃນພຣະຄຳພີ. ພວກເຮົາບໍ່ຄວນຄິດວ່າ "ບັບຕິສະມາ" ຫມາຍເຖິງການບັບຕິສະມາດ້ວຍນ້ຳສະເຫມີໄປ. ການຕີໝາຍຄວາມວ່າ ບັບຕິສະມາໃນໂລມ 6, ຄາລາເຕຍ 3:27 ແລະ ໂກໂລຊາຍ 2:12 ແມ່ນໝາຍເຖິງການຮັບບັບຕິສະມາດ້ວຍນ້ຳ, ກໍເປັນການທຳລາຍຄວາມໝາຍຂອງຂໍ້ພຣະຄຳພີເຫຼົ່ານີ້. ພິທີກຳທາງສາສະຫນາທີ່ໄດ້ເພີ່ມເຂົ້າໃນຂໍ້ຄວາມເຫຼົ່ານີ້ແມ່ນມີຈຸດປະສົງເພື່ອເນັ້ນຫນັກໃສ່ພຣະຄຸນຂອງພຣະເຈົ້າ (ໂຣມ 6:14).

<u>ຈຸດເລີ່ມຕົ້ນຂອງບັບຕິສະມາດ້ວຍນ້ຳ</u>

ມີຫຼາຍຄົນມັກວ່າ ບັບຕິສະມາໃນນ້ຳແມ່ນຫຼັກສອນໃນພຣະຄຳພີໃຫມ່ ແລະ ບັບຕິສະມາເລີ່ມມີໃນຍຸກຂອງໂຢຮັນບັບຕິສະໂຕ. ແຕ່ອັນນີ້ບໍ່ແມ່ນຄວາມຈິງ! ເຮັບເຣີ 6:2 ແລະ 9:10 ໄດ້ກ່າວເຖິງ "ຫຼັກຄຳສອນຂອງການຮັບບັບຕິສະມາ" ແລະ "ການຊຳລະລ້າງຕ່າງໆ" ຮ່ວມກັບພຣະບັນຍັດຂອງໂມເຊ. ໃນຍຸກພຣະຄຳພີເດີມ, ຊາວອິດສະຣາເອນໄດ້ຖືປະຕິບັດບັບຕິສະມາດ້ວຍນ້ຳຫຼາຍແບບ. ການຮັບບັບຕິສະມາເຫຼົ່ານີ້ (ຫຼືການຊຳລະລ້າງ) ມີຢູ່ໃນອົບພະຍົບ 29:4, ລະບຽບພວກເລວີ 14:4-7, ຈົດເຊັນບັນຊີ 8:7, 19:7-10 ແລະ ຂໍ້ພຣະຄຳພີເດີມອີກຫລາຍຂໍ້.

ຊາວຍິວບໍ່ໄດ້ຖາມໂຢຮັນ ບັບຕິສະໂຕ ວ່າ, "ເຈົ້າເຮັດຫຍັງຢູ່?" ຫຼື "ບັບຕິສະມາແມ່ນຫຍັງ?" ຕອນທີ່ລາວເລີ່ມໃຫ້ບັບຕິສະມາ. ພວກເຂົາຮູ້ວ່າ ຮັບບັບຕິສະມາແມ່ນຫຍັງ ຫຼັງຈາກຫຼາຍຮ້ອຍປີທີ່ໃຊ້ຊີວິດພາຍໃຕ້ກົດບັນຍັດຂອງໂມເຊ. ພວກເຂົາພຽງແຕ່ສົງໄສວ່າ ເປັນຫຍັງໂຢຮັນ ຈຶ່ງໃຫ້ບັບຕິສະມາແທນພວກຜູ້ປະກາດຄົນອື່ນໆ ຫຼືພຣະຄຣິດ (ໂຢຮັນ 1:25). ຈົ່ງຈື່ໄວ້ວ່າ ບັບຕິສະມາໃນນ້ຳໄດ້ເລີ່ມຕົ້ນໃນພຣະຄຳພີເດີມ. ມັນເປັນຫຼັກຄຳສອນຕາມພຣະບັນຍັດ, ບໍ່ແມ່ນຫຼັກຄຳສອນເລື່ອງການໃຊ້ຊີວິດໂດຍພຣະຄຸນ (ໂຣມ 6:14).

<u>ການຮັບບັບຕິສະມາດ້ວຍນ້ຳແມ່ນສັນຍາລັກບໍ?</u>

ຫຼາຍຄົນສອນວ່າ ບັບຕິສະມາໂດຍພຣະວິນຍານບໍລິສຸດໃນໂຣມ 6 ແມ່ນບັບຕິສະມາດ້ວຍນໍ້າ ແລະ ເປັນສັນຍາລັກຂອງການຖືກຝັງ ແລະ ການຟື້ນຄືນຊີວິດຂອງພວກເຮົາກັບພຣະຄຣິດ. ຂໍ້ທີສີ່ກ່າວວ່າ ພວກເຮົາຖືກ "ຝັງກັບພຣະອົງໂດຍການຮັບບັບຕິສະມາ ເພື່ອໃຫ້ພວກເຮົາເຂົ້າໃນຄວາມຕາຍຂອງພຣະອົງ." ໃນຕົວຈິງແລ້ວ ບັບຕິສະມານີ້ແມ່ນມີຄວາມໝາຍບາງຢ່າງ; ມັນບໍ່ແມ່ນສັນຍາລັກທົ່ວໄປ. ພຣະຄໍາພີບໍ່ເຄີຍສອນວ່າ ຄົນເຮົາຖືກຝັງຢູ່ໃນນໍ້າ! ຈຶ່ງບໍ່ມີມູນທີ່ຈະຄິດວ່າ ການຮັບບັບຕິສະມາດ້ວຍນໍ້າ (ການແຊ່ນໍ້າ) ແມ່ນສັນຍາລັກຂອງການຖືກຝັງຮ່ວມກັບພຣະຄຣິດ. ພວກເຮົາບໍ່ໄດ້ຝັງຄົນຢູ່ໃນນໍ້າ ແລະ ບໍ່ມີວັດທະນະທໍາໃດກ່າວໄວ້ໃນພຣະຄໍາພີ. ພຣະຄຣິດໄດ້ຖືກຝັງໄວ້ໃນອຸໂມງແຫ້ງທີ່ເຮັດໂດຍຫີນ! ບໍ່ມີບ່ອນໃດໃນພຣະຄໍາພີໄດ້ສອນວ່າ ບັບຕິສະມາໃນນໍ້າເປັນສັນຍາລັກຂອງການຖືກຝັງ. ແຕ່ການຮັບບັບຕິສະມາໃນນໍ້າເປັນພິທີການທີ່ສະແດງເຖິງການຊໍາລະລ້າງ ຫຼືເຮັດໃຫ້ບໍລິສຸດ (ໂຢຮັນ 3:23-25, ກິດຈະການ 22:16, ຈົດເຊັນບັນຊີ 31:23-24, ເອເຊກຽນ 36:25).

<u>ບັບຕິສະມາໃນຍຸກແຫ່ງພຣະຄຸນ</u>

ໂຢຮັນຜູ້ບັບຕິສະໂຕ ແລະ ອັກຄະສາວົກສິບສອງຄົນໄດ້ຖືກສົ່ງໄປເພື່ອຮັບບັບຕິສະມາດ້ວຍນໍ້າ (ມັດທາຍ 28:19-.20; ມາລະໂກ 1:4; 16:16). ແຕ່ໂປໂລຊຽນວ່າ: "ດ້ວຍວ່າພຣະຄຣິດໄດ້ໃຊ້ເຮົາມາເພື່ອບໍ່ໃຫ້ຮັບບັບຕິສະມາ ແຕ່ເພື່ອປະກາດຂ່າວປະເສີດ: ບໍ່ແມ່ນດ້ວຍປັນຍາຂອງຄໍາເວົ້າ, ຢ້ານວ່າໄມ້ກາງແຂນຂອງພຣະຄຣິດຈະຖືກສ້າງຂຶ້ນໂດຍບໍ່ມີຜົນກະທົບ" (1 ໂກຣິນໂທ 12:13).

ດັ່ງທີ່ພວກເຮົາໄດ້ສຶກສາມາແລ້ວ, ຕອນນີ້ ພວກເຮົາໃຊ້ຊີວິດຢູ່ໃນຍຸກແຫ່ງພຣະຄຸນ. ພວກເຮົາເຫັນວ່າ ບັບຕິສະມາໃນນໍ້າໄດ້ເລີ່ມມາຕັ້ງແຕ່ຍຸກຂອງພຣະບັນຍັດໃນພຣະສັນຍາເດີມ. ໃນຍຸກນີ້, ພຣະປະສົງຂອງພຣະເຈົ້າກ່ຽວກັບບັບຕິສະມາໃນນໍ້າແມ່ນຫຍັງ? ເອເຟໂຊ 4:5 ເວົ້າຢ່າງຊັດເຈນວ່າ ມີ "ບັບຕິສະມາອັນດຽວ" ສໍາລັບພຣະກາຍຂອງພຣະຄຣິດໃນຍຸກນີ້. ບໍ່ແມ່ນສອງ! ບໍ່ແມ່ນສາມ! ມີບັບຕິສະມາອັນດຽວໃນຍຸກນີ້!

"ບັບຕິສະມາອັນດຽວ" ແມ່ນຫຍັງ? "ດ້ວຍວ່າ ເຮົາທຸກຄົນໄດ້ຮັບບັບຕິສະມາໂດຍພຣະວິນຍານອົງດຽວ, ບໍ່ວ່າພວກເຮົາຈະເປັນຢິວ ຫລື ຄົນຕ່າງຊາດ, ບໍ່ວ່າພວກເຮົາຈະເປັນຂ້າທາດ ຫຼື ອິດສະລະ; ແລະພວກເຮົາທັງຫມົດຖືກສ້າງຂຶ້ນມາເພື່ອດື່ມພຣະວິນອົງດຽວ ຈຶ່ງເຂົ້າໄປເປັນກາຍອັນດຽວກັນ ແລະພຣວິນຍານອົງດຽວກັນນັ້ນເປັນເຫມືອນນໍ້າທີ່ປະທານໃຫ້ເຮົາທຸກຄົນໄດ້ດື່ມ" (1 ໂກລິນໂທ 12:13). ສະມາຊິກທັງໝົດໃນພຣະກາຍຂອງພຣະຄຣິດໄດ້ຮັບບັບຕິສະມາໂດຍພຣະວິນຍານບໍລິສຸດເຂົ້າເປັນກາຍອັນດຽວ. ສະນັ້ນ ຈາກບັບຕິສະມາທັງຫມົດນີ້, ກໍເປັນທີ່ຊັດເຈນແລ້ວວ່າຕ້ອງເປັນ "ບັບຕິສະມາດຽວ." ດັ່ງນັ້ນ, ໃນຍຸກນີ້ແມ່ນບໍ່ຈໍາເປັນຕ້ອງມີບ່ອນໃຫ້ບັບຕິສະມາໃນນໍ້າແບບຕາຍຕົວ. ຖ້າວ່າ ພວກເຮົາເພີ່ມການຮັບບັບຕິສະມາດ້ວຍນໍ້າເຂົ້າໄປໃນບັບຕິສະມາຂອງ 1 ໂກຣິນໂທ 12:13, ພວກເຮົາມີສອງບັບຕິສະມາ. ແຕ່ອັນນີ້ເປັນໄປບໍ່ໄດ້! ພວກເຮົາຈະຕ້ອງບໍ່ຂັດແຍ່ງກັບພຣະຄໍາຂອງພຣະເຈົ້າໂດຍການປ່ຽນ "ຫນຶ່ງ" ໃຫ້ເປັນ "ສອງ." ຖ້າພວກເຮົາເຂົ້າໃຈຢ່າງແທ້ຈິງກ່ຽວກັບ "ບັບຕິສະມາອັນດຽວ" ໃນຍຸກນີ້, ພວກເຮົາຈະຮູ້ວ່າ ບັບຕິສະມາດ້ວຍນໍ້າກໍບໍ່ຈໍາເປັນຫຍັງເລີຍ. "ບັບຕິສະມາດຽວ" ເຮັດໃຫ້ພວກເຮົາມີຊີວິດທີ່ "ສົມບູນໃນພຣະອົງ" (ໂກໂລຊາຍ 2:10).

ພວກເຮົາໄດ້ຮັບພຣະພອນ "ດ້ວຍທາງວິນຍານທັງປວງໃນສະຫວັນ ແລະ ພຣະຄຣິດ." (ເອເຟໂຊ 1:3). ບັບຕິສະມາດ້ວຍນໍ້າຈະໃຫ້ປະໂຫຍດຫຍັງບໍ? ບໍ່ມີຫຍັງ! ເມື່ອຄຣິສຕະຈັກໃດໜຶ່ງ ຫຼື ຄະນະນິກາຍຕ່າງໆ ຮຽກຮ້ອງໃຫ້ສອນເລື່ອງບັບຕິສະມາດ້ວຍນໍ້າ, ພວກເຮົາຕ້ອງປະຕິເສດປະເພນີທາງສາສະໜາ ແລະ ຍຶດໝັ້ນໃນພຣະຄໍາຂອງພຣະເຈົ້າ!

<u>ຄໍາຖາມທວນຄືນ ບົດຮຽນ 29 - ບັບຕິສະມາດ້ວຍນໍ້າ</u>

<u>ຖືກ ຫຼື ຜິດ</u>

1. ຄຣິສຕະຈັກຫຼາຍແຫ່ງເນັ້ນໜັກໃສ່ການຮັບບັບຕິສະມາດ້ວຍນໍ້າ.
2. ຊາວອິດສະຣາເອນໄດ້ຮັບບັບຕິສະມາໃນນໍ້າຈາກໂມເຊຕອນຍ່າງຜ່ານທະເລແດງ.
3. ຄໍາວ່າ "ບັບຕິສະມາ" ໃນພຣະຄໍາພີຫມາຍຄວາມວ່າ, "ຖືກວາງໄວ້ໃນນໍ້າ."
4. ອິດສະຣາເອນໄດ້ "ຮັບບັບຕິສະມາອັນດຽວ" ພາຍໃຕ້ພຣະບັນຍັດຂອງໂມເຊ.

<u>ຄໍາຖາມແບບປາລະໄນ</u>

5. ການບັບຕິສະມາຂອງໂຢຮັນ ບັບຕິສະໂຕ:
   ກ. ໄດ້ບອກອິດສະຣາເອນໃຫ້ຮູ້ວ່າ ພຣະເຢຊູຄຣິດ ຈຶ່ງເປັນພຣະເມຊີອາ
   ຂ. ເອີ້ນຄົນຕ່າງຊາດໃຫ້ກັບໃຈໃຫມ່
   ຄ. ໄດ້ຖືກປະນາມຢ່າງຮ້າຍແຮງໂດຍພຣະເຢຊູຄຣິດ
   ງ. ເປັນສັນຍາລັກເຖິງການສິ້ນພຣະຊົນຂອງພຣະຄຣິດເທິງໄມ້ກາງແຂນ

6. ກິດຈະການ 2:4 ບອກເຖິງ:
   ກ. ການຄືງພຣະຄຣິດ.
   ຂ. ພຣະວິນຍານບໍລິສຸດໃຫ້ບັບຕິສະມາແກ່ຜູ້ເຊື່ອ ເພື່ອເຂົ້າສ່ວນໃນພຣະກາຍຂອງພຣະຄຣິດ.
   ຄ. ພຣະຄຣິດຈຶ່ງໃຫ້ບັບຕິສະມາດ້ວຍພຣະວິນຍານບໍລິສຸດຕາມທີ່ໄດ້ທໍານາຍໄວ້ໃນມັດທາຍ 3:11.
   ງ. ບັບຕິສະມາເພື່ອການກັບໃຈໃຫມ່ຂອງໂຢຮັນ.

7. ການຮັບບັບຕິສະມາໂດຍພຣະວິນຍານບໍລິສຸດ ເພື່ອເຂົ້າສ່ວນໃນພຣະກາຍຂອງພຣະຄຣິດ:
   ກ. ແມ່ນອັນດຽວກັນກັບບັບຕິສະມາຂອງພຣະຄຣິດດ້ວຍໄຟ.
   ຂ. ແມ່ນ "ບັບຕິສະມາອັນດຽວ" ທີ່ກ່າວໄວ້ໃນເອເຟໂຊ 4:5.
   ຄ. ເປັນບັບຕິສະມາອັນດຽວທີ່ພົບໃນພຣະຄໍາພີ.
   ງ. ແມ່ນອັນດຽວກັນກັບບັບຕິສະມາທີ່ພຣະຄຣິດຈຶ່ງໃຫ້ດ້ວຍພຣະວິນຍານບໍລິສຸດໃນກິດຈະການ 2.

ຕື່ມໃສ່ຊ່ອງຫວ່າງ

8. ຫລາຍຄົນສອນຜິດວ່າ ບັບຕິສະມາດ້ວຍນໍ້າເປັນ__________ຄໍາສອນຂອງພຣະສັນຍາ ແລະເລີ່ມໃນປະຫວັດສາດກັບ __________.

9. ການສອນວ່າ ບັບຕິສະມາໂດຍພຣະວິນຍານບໍລິສຸດໃນໂຣມ 6 ແມ່ນບັບຕິສະມາ ແລະ ເປັນສັນຍາລັກຂອງການຖືກຝັງ ແລະ ການຟື້ນຄືນຊີວິດຂອງພວກເຮົາກັບພຣະຄຣິດ ແມ່ນການສອນບໍ່ຖືກຕ້ອງ.

10. ເອເຟໂຊ 4:5 ກ່າວຢ່າງຈະແຈ້ງວ່າມີ "ບັບຕິສະມາ________" ສໍາລັບພຣະກາຍຂອງພຣະຄຣິດ. ໃນສະໄໝນີ້.

ສໍາລັບການສຶກສາເພີ່ມເຕີມ

1. ອົບພະຍົບ 19:5-6 ບອກເຖິງຈຸດປະສົງຂອງພຣະເຈົ້າທີ່ວ່າ ອິດສະຣາເອນ "ເປັນລາຊະອານາຈັກຂອງປະໂລຫິດ, ແລະເປັນຊາດທີ່ສັກສິດ." ອິດສະຣາເອນຈະມີຊື່ສຽງຫຍັງໃນໄລຍະອານາຈັກພັນປີຕາມເອຊາຢາ 61:6?

2. ໃນຖານະເປັນອານາຈັກຂອງປະໂລຫິດ, ອິດສະຣາເອນຈະນໍາຄວາມລອດພົ້ນມາໃຫ້ຄົນຕ່າງຊາດ. ເມື່ອພຣະຄຣິດຊົງປົກຄອງເທິງແຜ່ນດິນໂລກ. ພິທີການອັນໃດທີ່ຈໍາເປັນສໍາລັບພວກປະໂລຫິດ? ເບິ່ງອົບພະຍົບ 29:4.

3. ກິດຈະການ 13:24 ບອກພວກເຮົາວ່າ ໂຢຮັນ ບັບຕິສະໂຕໄດ້ປະກາດ "ບັບຕິສະມາແຫ່ງການກັບໃຈໃຫມ່ຂອງຊາວອິດສະຣາເອນທັງໝົດ." ຕາມມາຣະໂກ 1:4, ການຮັບບັບຕິສະມາຂອງໂຢຮັນແມ່ນເພື່ອຫຍັງ?

4. ໂຢຮັນຖືກສົ່ງໄປກຽມອິດສະຣາເອນໃຫ້ກາຍເປັນອານາຈັກຂອງປະໂລຫິດ. ອິດສະຣາເອນຕ້ອງເຮັດຫຍັງເພື່ອກຽມພ້ອມສໍາລັບອານາຈັກນີ້ບໍ? ເບິ່ງ ມັດທາຍ 3:5–6.

5. ການຮັບບັບຕິສະມາໃນນໍ້າ ເພື່ອຕ້ອງການໃຫ້ຊາວອິດສະຣາເອນ "ປົບໜີຈາກຄວາມໂກດຮ້າຍທີ່ຈະມາເຖິງ (ມັດທາຍ 3:7). ຈະເກີດຫຍັງຂຶ້ນກັບ "ຕົ້ນໄມ້" ທີ່ບໍ່ໄດ້ຮັບບັບຕິສະມາຈາກໂຢຮັນ? ເບິ່ງ ມັດທາຍ 3:10–12.

6. ການບັບຕິສະມາດ້ວຍນໍ້າແມ່ນກ່ຽວຂ້ອງກັບຄວາມລອດພົ້ນໃນອິດສະຣາເອນ. ລູກາ 7:29-30 ເນັ້ນຫນັກເຖິງຄວາມສໍາຄັນຂອງການໄດ້ຮັບບັບຕິສະມາຈາກໂຢຮັນແນວໃດແດ່?

7. ມາຣະໂກ 16:15-17 ແລະ ກິດຈະການ 2:38 ຢືນຢັນວ່າ ການຮັບບັບຕິສະມາດ້ວຍນໍ້າມີຄວາມກ່ຽວຂ້ອງກັບການໃຫ້ອະໄພບາບໃນອິດສະຣາເອນ?

8. ປຽບທຽບມາຣະໂກ 1:4 ແລະ ກິດຈະການ 2:38. ຈຸດປະສົງພື້ນຖານຂອງບັບຕິສະມາດ້ວຍນໍ້າໃນອິດສະຣາເອນປ່ຽນແປງຫຼັງຈາກພຣະຄຣິດໄດ້ສິ້ນພຣະຊົນ ແລະ ເປັນຄືນຈາກຄວາມຕາຍບໍ?

9. ຫລາຍຄະນະນິກາຍສອນວ່າ ບັບຕິສະມາດ້ວຍນໍ້າເປັນພິທີການທີ່ຈໍາເປັນສໍາລັບຄຣິສຕະຈັກໃນປັດຈຸບັນນີ້. ພວກເຮົາຮຽນຮູ້ຫຍັງແດ່ກ່ຽວກັບພິທີການຢູ່ໃນເອເຟໂຊ 2:15 ແລະ ໂກໂລຊາຍ 2:14, 20?

10. ບາງຄົນຈະໂຕ້ຖຽງວ່າ ໂປໂລຮັບບັບຕິສະມາດ້ວຍນໍ້າ ແລະ ດ້ວຍເຫດນັ້ນ ພວກເຮົາຈຶ່ງຄວນເຮັດເຊັ່ນກັນ. ຢ່າງໃດກໍຕາມ, ໂປໂລຮັບບັບຕິສະມາດ້ວຍນໍ້າພຽງແຕ່ຕອນຕົ້ນຂອງການຮັບໃຊ້ຂອງລາວເທົ່ານັ້ນ. ຕໍ່

ມາລາວໄດ້ສອນວ່າມີ "ບັບຕິສະມາອັນດຽວ" ແລະ ບໍ່ແມ່ນການຮັບບັບຕິສະມາດ້ວຍນ້ຳ (1 ໂກລິນໂທ 1:17, 12:13; ເອເຟໂຊ 4:5). ມີບັບຕິສະມາໃດແດ່ທີ່ໂປໂລໄດ້ມີສ່ວນຮ່ວມໃນລະຫວ່າງການຮັບໃຊ້ຂອງລາວໃນຕອນຕົ້ນ? ປັດຈຸບັນນີ້, ພວກເຮົາຄວນຮັບບັບຕິສະມາເຫຼົ່ານີ້ບໍ? ເບິ່ງກິດຈະການ 16:3, 18:6, 18:18, 21:26.